**ບົດຮຽນໂຮງຮຽນວັນອາທິດ**

ວັນອາທິດ ທີ 9 ມິຖຸນາ 2024 (06-09-2024)

---

## ພຣະສັນຍາຂອງພຣະເຈົ້າເລື່ອງການເກັບຮັກສາໄວ້

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າໄດ້ຊົງສັນຍາວ່າຈະຊົງປົກປັກຮັກສາການຊົງສ້າງຂອງພຣະອົງ.

**ພຣະຄັມພີຕອບສນອງຊີວິດ:**

ທ່ານສາມາດໃສ່ຊື່ໃຫ້ "<u>ການເລີ່ມຕົ້ນໃໝ່</u>" ໃນຊີວິດຂອງທ່ານ-ຊ່ວງເວລາທີ່ທ່ານເລີ່ມຕົ້ນໃໝ່ໃນທາງໃດທາງນຶ່ງໄດ້ບໍ່? ບາງຄັ້ງການເລີ່ມຕົ້ນໃໝ່ມາເຖິງໃນເມື່ອພວກເຮົາຍົກຍ້າຍເຂົ້າໄປສູ່ທີ່ຢູ່ໃໝ່. ບັນດາຄົນອື່ນໆມີປະສົບການ ການເລີ່ມຕົ້ນໃໝ່ ຫຼັງຈາກການຮຽນຈົບຈາກມະຫາວິທຍາລັຍ, ຫຼັງຈາກແຕ່ງງານ, ຫຼືຫຼັງຈາກໄດ້ຮັບວຽກງານໃໝ່. ການເລີ່ມຕົ້ນໃໝ່ເຫຼົ່ານີ້ມັກຈະນຳມາເຖິງ <u>ຄວາມຕື່ນເຕັ້ນ</u> ແລະ<u>ຄວາມຄາດຫວັງ</u>. ການເລີ່ມຕົ້ນໃໝ່ອື່ນໆທີ່ບໍ່ໄດ້ນຳເອົາຄວາມສຸກມາໃຫ້ພວກເຮົາເຊັ່ນ: ການເສັຽຊີວິດຂອງສະມາຊິກໃນຄອບຄົວ, ການແຕ່ງງານທີ່ຫຼົ້ມເຫຼວ, ການວິນິດສັຍທາງການແພດທີ່ບໍ່ຄາດຄິດ, ຫຼືແມ່ນແຕ່ພັຍພິບັດລະດັບຊາດອາດເຮັດໃຫ້ພວກເຮົາໂສກເສົ້າຫຼືສັບສົນໄດ້. ໃນສະຖານະການດັ່ງກ່າວ, ພຣະເຈົ້າຈະຊົງປະທານ<u>**ພຣະຄຸນ**</u>ໃຫ້ພວກເຮົາກ້າວໄປຂ້າງໜ້າ, ເຖິງແມ່ນວ່າພວກເຮົາບໍ່ເຂົ້າໃຈສະຖານະການຂອງພວກເຮົາກໍ່ຕາມ.

ປຶ້ມພຣະຄັມພີ ປະຖົມມະການ ບັນທຶກວິທີທີ່ພຣະເຈົ້າໄດ້ຊົງຕັດສິນໂລກຜ່ານນ້ຳຖ້ວມຍິ່ງໃຫຍ່, ແຕ່ໂດຍຜ່ານ ໂນອາ ແລະຄອບຄົວຂອງລາວ, ພຣະເຈົ້າໄດ້ຊົງສງວນຮັກສາສິ່ງຊົງສ້າງຂອງພຣະອົງແລະຊົງເລີ່ມຕົ້ນໃໝ່. ພຣະດຳຣັດ(ຄຳສັ່ງ)ຂອງພຣະເຈົ້າ ຕໍ່ໂນອາເສີມຂຍາຍການຊົງດູແລຂອງພຣະເຈົ້າຕໍ່ສິ່ງຊົງສ້າງຂອງພຣະອົງ. **ພຣະອົງໄດ້ຊົງຢືນຢັນພັນທະສັນຍາຂອງພຣະອົງກັບມະນຸດຊາດ, ຢືນຢັນຄຸນຄ່າຊີວິດຂອງມະນຸດ, ແລະຊົງສັນຍາວ່າຈະຊົງສງວນຮັກສາການຊົງສ້າງຂອງພຣະອົງ.**

| ໃກ້ທີ່ສຸດທີ່ທ່ານໄດ້ມາປະສົບກັບພັຍພິບັດທາງທັມມະຊາດແມ່ນຫຍັງ? |
|---|

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

1. **<u>ປະຖົມມະການ 9:1-3</u>**

*[1]ພຣະເຈົ້າຊົງອວຍໄຊໃຫ້ພອນແກ່ໂນອາ ພ້ອມທັງລູກຊາຍທັງສາມຄົນຂອງເພິ່ນວ່າ, "ໃຫ້ພວກເຈົ້າມີລູກເຕົ້ານາກທະວີຂຶ້ນທົ່ວແຜ່ນດິນ*
*ໂລກເທີ້ນ. [2]ສັດທຸກໆຊະນິດໃນໂລກ ຄືສັດໃຊ້ງານ ສັດເລືອຄານ ສັດໃຫຍ່ ສັດນ້ອຍ ນົກໜູແລະປູປານາໆຊະນິດຈະຢ້ານກົວແລະ*
*ຢູ່ໃຕ້ອຳນາດຂອງເຈົ້າ. [3]ແຕ່ບັດນີ້ໄປສັດທຸກໆຊະນິດ ແລະພືດທຸກໆຢ່າງ ພວກເຈົ້າກິນໄດ້ເພາະເຮົາໄດ້ປະທານສິ່ງນັ້ນໃຫ້ເປັນອາ-*
*ຫານແກ່ພວກເຈົ້າ.*

ພຣະຄັມພີ ປະຖົມມະການ ບົດທີ່ 1 ແລະ 2 ເນັ້ນໃຫ້ເຫັນເຖິງວິທີທີ່ພຣະເຈົ້າໄດ້ຊົງສ້າງໂລກ, ສ້າງມະນຸດຊາດຕາມພຣະສາຍາ(ຮູບຮ່າງ)ຂອງພຣະອົງ, ແລະຊົງມອບໝາຍໃຫ້ມະນຸດປົກຄອງສິ່ງຊົງສ້າງຂອງພຣະອົງໃນຖານະທີ່ເປັນຜູ້ຖືຮູບຮ່າງຂອງພຣະອົງ. ແຕ່ໜ້າເສັຽດາຍ, ຄວາມບາບໄດ້ເຮັດໃຫ້ພຣະສາຍາຂອງພຣະເຈົ້າຖືກທຳລາຍຢ່າງໄວວາ, ເຖິງແມ່ນວ່າພຣະປະສົງຂອງພຣະເຈົ້າສຳລັບມະນຸດຊາດເພື່ອຄຸ້ມຄອງສິ່ງຊົງສ້າງຂອງພຣະອົງແມ່ນບໍ່ປ່ຽນແປງກໍ່ຕາມ. ພຣະຄັມພີ ປະຖົມມະການ ບົດທີ່ 6-8 ບັນທຶກຄວາມໂສກເສົ້າທີ່ເກີດຂຶ້ນໃນເວລາທີ່ມະນຸດຊາດກາຍເປັນຄົນບາບເຫຼືອລົ້ນ ພຣະເຈົ້າໄດ້ຊົງຕັ້ງພຣະທັຍ(ໃຈ)ທີ່ຈະທຳລາຍໂລກຜ່ານນ້ຳຖ້ວມຄັ້ງຍິ່ງໃຫຍ່.

ຂນະທີ່ ໂນອາແລະຄອບຄົວອອກຈາກນາວາ(ເຮືອ)ຫຼັງຈາກນໍ້າຖ້ວມ, ໂນອາໄດ້ຖວາຍເຄື່ອງບູຊາເພື່ອຄວາມກະຕັນຍູຕໍ່ພຣະເຈົ້າ. ພຣະເຈົ້າໄດ້ຊົງຮັບເອົາເຄື່ອງບູຊາຂອງໂນອາ ແລະໄດ້ຊົງປະກາດວ່າພຣະອົງຈະບໍ່ຊົງທໍາລາຍແຜ່ນດິນໂລກດ້ວຍນໍ້າຖ້ວມອີກດັ່ງທີ່ພຣະອົງໄດ້ຊົງກະທໍາມາກ່ອນ. ພຣະເຈົ້າໄດ້ຊົງອວຍພຣະພອນໂນອາແລະຄອບຄົວຂອງລາວດ້ວຍພຣະໂອວາດວ່າ: "ໃຫ້ພວກເຈົ້າມີລູກເຕົ້າມາກທະວີຂຶ້ນທົ່ວແຜ່ນດິນໂລກເທີ້ນ." (ຂໍ້ 1). ຄໍາເວົ້າເຫຼົ່ານີ້ເປັນສຽງທີ່ຄຸ້ນເຄີຍບໍ່? **ຄວນຈະຄຸ້ນເຄີຍ!** ມັນປາກົດຄັ້ງແລກໃນພຣະຄັມພີ ປະຖົມມະການ ບົດທີ່ 1 ຂໍ້ 8. ການຂນານ(ໃຊ້ພາສາທີ່ໃກ້ຄຽງກັນ)ເນັ້ນໜັກເຖິງວິທີທີ່ພຣະເຈົ້າຊົງເລີ່ມຕົ້ນອີກເທື່ອນຶ່ງ, ກັບອາດາມ ໃນພຣະຄັມພີປະຖົມມະການບົດທີ່ 1 ແລະ 2. ໃນປະຈຸບັນ, ພຣະອົງໄດ້ຊົງສືບຕໍ່ກັບ ໂນອາ ສິ່ງທີ່ພຣະອົງໄດ້ຊົງເລີ່ມຕົ້ນກັບ ອາດາມ. ພຣະເຈົ້າໄດ້ຊົງບອກ ໂນອາ ເໝືອນກັນວ່າມະນຸດຊາດ ດຽວນີ້ສາມາດມີອິສຣະທີ່ຈະກິນສິ່ງທີ່ມີຊີວິດທັງຫຼາຍ, ບໍ່ແມ່ນແຕ່ພຽງພືດທີ່ມີຊີວິດເທົ່ານັ້ນ. ຂໍໃຫ້ສັງເກດວ່າພາສາທີ່ກ່ຽວກັບສິ່ງທີ່ມີຊີວິດຢູ່ໃນພຣະຄັມພີ ປະຖົມມະການ ບົດທີ່ 9:2-3 ເຖິງປະຖົມມະການ ບົດທີ່ 1 ດັ່ງຕໍ່ລົງໄປນີ້:

- "ທຸກໆສິ່ງທີ່ມີຊີວິດຢູ່ເທິງແຜ່ນດິນໂລກ" (9:2; 1:24)
- "ນົກທຸກໂຕໃນທ້ອງຟ້າ" (9:2; 1:28)
- "ທຸກໆສິ່ງທີ່ມີຊີວິດທີ່ເລືອຄານຢູ່ເທິງພື້ນດິນ" (9:2; 1:28)
- "ທຸກໆໂຕປາຢູ່ໃນທະເລ" (9:2; 1:28)
- "ພືດສີຂຽວ" (9:3; 1:30)

ພຣະບັນຍັດໄດ້ໃຫ້ອິສຣະພາບໃໝ່ແກ່ຜູ້ຄົນໂດຍການຂຍາຍອາຫານທີ່ເປັນໄປໄດ້ ແຕ່ພຣະບັນຊາ(ຄໍາສັ່ງ)ຂອງພຣະເຈົ້າທີ່ໃຫ້ດູແລສິ່ງຊົງສ້າງຂອງພຣະອົງຍັງຄົງຢູ່. ພຣະອົງຊົງມີພຣະປະສົງໃຫ້ ໂນອາ ແລະລູກຫຼານຂອງລາວສັດຊື່, ເພີ່ມທະວີຂຶ້ນ, ແລະເຕັມແຜ່ນດິນໂລກໃນຖານະທີ່ເປັນຜູ້ຖືພຣະສາຍາ (ຮູບຮ່າງ) ຂອງພຣະອົງ.

*ພຣະບັນຊາໃຫ້ສັດຊື່ແລະເພີ້ມຈໍານວນໃຊ້ໄດ້ແນວໃດກັບຊີວິດຂອງພວກເຮົາໃນປະຈຸບັນນີ້?*

## 2. ປະຖົມມະການ 9:4-7

*4 ແຕ່ມີສິ່ງທີ່ເຈົ້າບໍ່ຄວນກິນ ຄືເລືອດຊຶ່ງເປັນຫຼັກສໍາຄັນຂອງຊີວິດ. 5 ຖ້າຜູ້ໃດຂ້າເຈົ້າ ເຮົາຈະລົງໂທດຜູ້ນັ້ນເຖິງຕາຍ ເຮົາຈະທໍາລາຍສັດທຸກຕົວທີ່ຂ້າເຈົ້າ ແລະເຮົາຈະລົງໂທດທຸກໆຄົນທີ່ຂ້າເພື່ອນມະນຸດດ້ວຍກັນ. 6 ຜູ້ໃດຂ້າເພື່ອນສັນໃດ ຜູ້ນັ້ນຈະຖືກເພື່ອນຂ້າສັນນັ້ນເພາະວ່າພຣະເຈົ້າໄດ້ຊົງສ້າງມະນຸດຕາມຮູບຮ່າງຂອງພຣະອົງ. 7 ສະນັ້ນ ພວກເຈົ້າຈົ່ງສືບພໍ່ແທນແນວໃຫ້ມາກຫຼາຍ ເພື່ອໃຫ້ເຊື້ອສາຍຂອງພວກເຈົ້າແຜ່ພາຍໄປທົ່ວທຸກແຫ່ງໃນໂລກ."*

ພຣະເຈົ້າຊົງຫ້າມບໍ່ໃຫ້ກິນຊີ້ນທີ່ມີເລືອດຕິດຢູ່ໃນນັ້ນ. ເມື່ອຄົນຫຼືສັດເສັຽເລືອດຫຼາຍເກີນໄປ, ພວກເຂົາຕາຍ. ລະບຽບເລວີ 17:11 ກ່າວເຖິງເຫດຜົນຂອງການຫ້າມນັ້ນວ່າ: "ເພາະວ່າຊີວິດກໍມີຢູ່ໃນເລືອດ." ເລືອດໄດ້ຮັກສາຊີວິດຂອງສັດ, ດັ່ງນັ້ນພຣະເຈົ້າຈຶ່ງຊົງມີພຣະປະສົງບໍ່ໃຫ້ຄົນກິນມັນ. ພຣະອົງຊົງໃຫ້ຄວາມສໍາຄັນຂອງຊີວິດຢ່າງຈິງຈັງ- ແມ່ນແຕ່ການເອົາຊີວິດ(ຂ້າ)ສັດໂດຍມະນຸດ. ການຊົງສ້າງພັນທະສັນຍາຂອງພຣະອົງອີກຄັ້ງ ຮວມເຖິງການຫ້າມບໍ່ໃຫ້ມີການຄາດຕະກັມ(ການຂ້າ)ອີກດ້ວຍ. ພຣະເຈົ້າໄດ້ຊົງໃຫ້ຊີວິດແກ່ມະນຸດແລະມະນຸດຄົນອື່ນໆບໍ່ມີສິດທີ່ຈະເອົາຊີວິດນັ້ນໄປຈາກພວກເຂົາເຈົ້າ. ຂໍ້ຄວາມໃຫ້ເຫດຜົນວ່າ: "**ເພາະພຣະເຈົ້າໄດ້ຊົງສ້າງມະນຸດຕາມພຣະສາຍາຂອງພຣະອົງ**" (ປຖກ 9:6). ສັງຄົມຂອງພວກເຮົາສົມຄວນໃຫ້ຄຸນຄ່າຊີວິດຂອງມະນຸດແນວໃດ? ຖ້າຫາກວ່າພວກເຮົາເຊື່ອວ່າຊີວິດຂອງມະນຸດມີຄ່າໃນທຸກຂັ້ນຕອນ, ຈົ່ງພິຈາລະນາໃນສິ່ງຕໍ່ລົງໄປນີ້:

- ພວກເຮົາປົກປ້ອງສິດທິຂອງເດັກໃນທ້ອງແມ່(ຍັງບໍ່ທັນເກີດ-the unborn).
- ເດັກນ້ອຍຖືວ່າເປັນພຣະພອນຈາກພຣະເຈົ້າ(blessing from God).
- ຜູ້ຄົນເຖົ້າລົບເຊິ່ງກັນແລະກັນໃນກໍາລັງແຮງງານ(work force).

- ພວກເຮົາສົ່ງເສີມຄວາມຍຸດຕິທັມໃຫ້ກັບທຸກຄົນໃນທຸກລະດັບຂອງສັງຄົມ(every level of society).
- ພວກເຮົາປະຕິບັດຕໍ່ຜູ້ສູງອາຍຸດ້ວຍຄວາມຮັກແລະຄວາມເຫັນອົກເຫັນໃຈ(with the elderly).

ນີ້ແມ່ນ **<u>ຄຳຕົວະ</u>** ບາງຢ່າງທີ່ໂລກຂອງພວກເຮົາເຊື່ອ ກ່ຽວກັບສິ່ງທີ່ເຮັດໃຫ້ຜູ້ຄົນມີຄຸນຄ່າ:

- **ຮູບຮ່າງລັກສນະ.** ຄຸນຄ່າຂອງຜູ້ຄົນຢູ່ທີ່<u>ຮູບຮ່າງລັກສນະ</u>ພາຍນອກຂອງພວກເຂົາເຈົ້າ.
- **ຄວາມຮັ່ງມີ.** ຄຸນຄ່າຂອງຜູ້ຄົນແມ່ນຢູ່ໃນ<u>ຂນາດຂອງບັນຊີທະນາຄານ</u> ຫຼືຫຼັກຊັບທາງດ້ານການເງິນຂອງພວກເພິ່ນ.
- **ອຳນາດ.** ຄຸນຄ່າຂອງຜູ້ຄົນຢູ່ທີ່<u>ຕຳແໜ່ງ</u>ຂອງພວກເຂົາເຈົ້າ ເທິງຄັນໃດຂອງອົງການ ຫຼື ໃນຣັຖບານ.
- **ຊື່ສຽງ.** ຄຸນຄ່າຂອງຜູ້ຄົນຢູ່ທີ່<u>ຈຳນວນຄົນທີ່ຮູ້</u>ວ່າພວກເພິ່ນແມ່ນໃຜ.

ໃນທາງກົງກັນຂ້າມ, ພຣະຄຳຂອງພຣະເຈົ້າຊົງເວົ້າວ່າ: **<u>ພວກເຮົາມີຄຸນຄ່າລາຄາກໍ່ຍ້ອນວ່າພວກເຮົາໄດ້ຖືກຊົງສ້າງຂຶ້ນມາໃນພຣະສາຍາ(ຮູບຮ່າງ)ຂອງພຣະເຈົ້າ</u>.**

*ມີວິທີປະຕິບັດອັນໃດແດ່ທີ່ພວກເຮົາສາມາດສະແດງໃຫ້ເຫັນວ່າ ພວກເຮົາເຫັນຄຸນຄ່າຂອງມະນຸດທຸກຄົນ?*

## 3. <u>ປະຖົມມະການ 9:8-13</u>

*8 ພຣະເຈົ້າຊົງສັນຍາກັບໂນອາແລະລູກຊາຍຂອງເພິ່ນວ່າ, 9 "ແຕ່ບັດນີ້ເປັນຕົ້ນໄປ ເຮົາສັນຍາຕໍ່ເຈົ້າ ເຊື້ອສາຍຂອງເຈົ້າ 10 ແລະສັດທຸກ*
*ຊະນິດທີ່ອອກມາຈາກເຮືອເຊັ່ນ ນົກໜູ ສັດບ້ານ ສັດປ່າວ່າ, 11 ດ້ວຍຄຳພັ້ນສັນຍາທີ່ເຮົາຕັ້ງໄວ້ເຮົາຈະບໍ່ທຳລາຍທຸກໆສິ່ງທີ່ມີຊີວິດ*
*ດ້ວຍນ້ຳ ນ້ຳຖ້ວມໂລກເຊັ່ນນີ້ຈະບໍ່ມີອີກຈັກເທື່ອ. 12-13 ພຣະເຈົ້າຊົງກ່າວຕື່ມອີກວ່າ, "ເຮົາຕັ້ງຮຸ້ງກິນນ້ຳໄວ້ເພື່ອເປັນເຄື່ອງໝາຍສຳຄັນ*
*ຂອງຄຳພັ້ນສັນຍາຕລອດໄປເປັນນິດ ຊຶ່ງເຮົາໄດ້ກະທຳຕໍ່ເຈົ້າແລະສັດຕ່າງໆ ຮຸ້ງ ກິນນ້ຳຈະເປັນເຄື່ອງໝາຍສຳຄັນຂອງຄຳພັ້ນສັນ-*
*ຍາທີ່ເຮົາໄດ້ຕັ້ງໄວ້ກັບໂລກ.*

ໂດຍປົກກະຕິແລ້ວ, ພັນທະສັນຍາເປັນຂໍ້ຕົກລົງລະຫວ່າງສອງຝ່າຍຫຼືຫຼາຍກວ່າສອງຂຶ້ນໄປ. ແຕ່ລະຝ່າຍເຮັດໃຫ້ມີຄຳພັ້ນສັນຍາວ່າຈະປະຕິບັດຕາມພາກສ່ວນຂອງຂໍ້ຕົກລົງນັ້ນ. ແຕ່ວ່າຂໍ້ຕົກລົງຂອງພຣະເຈົ້າກັບອາດາມ, ມະນຸດຄົນທຳອິດ, ເບິ່ງຄືວ່າເປັນພັນທະສັນຍາ (ປຖກ 2:16-17), ເຖິງແມ່ນວ່າພຣະຄັມພີ ປະຖົມມະການ ບົດທີ 9 ຂໍ້ 9 ເປັນເທື່ອທຳອິດທີ່ຄຳວ່າ "**<u>ພັນທະສັນຍາ</u>**" ປາກົດຢູ່ໃນພຣະຄັມພີ. <u>ພັນທະສັນຍາລະຫວ່າງພຣະເຈົ້າກັບຄອບຄົວຂອງໂນອາຍັງປະກອບດ້ວຍສິ່ງທີ່ມີຊີວິດທັງໝົດໃນໂລກ</u>. ຈົ່ງໝາຍເຫດພາສາສະເພາະໃນຂໍ້ທີ 9 ເຖິງ 10 ໃນຄຳວ່າ:

- "ເຈົ້າ" (ໂນອາແລະຄອບຄົວຂອງລາວ)
- "ເຊື້ອສາຍຂອງເຈົ້າທີ່ເກີດພາຍຫຼັງເຈົ້າ" (ບັນດາພວກທີ່ເກີດຈາກເຊື້ອສາຍຂອງໂນອາ).
- "ທຸກໆສິ່ງທີ່ມີຊີວິດທີ່ຢູ່ຮ່ວມກັບເຈົ້າ-ສັດຂອງໂລກທຸກໂຕທີ່ໄດ້ອອກມາຈາກນາວາ(ເຮືອ)"

ຄຳກິຣິຍາ "<u>ສະຖາປະນາ</u>" ("establish") ຂໍ້ທີ່ 9 ແລະ 11 ໄດ້ແປກົງໂຕວ່າ "<u>ເປັນເຫດໃຫ້ຢືນຢູ່</u>." ("cause to stand") ດັ່ງນັ້ນ, ພຣະເຈົ້າຈຶ່ງໄດ້ຊົງຢືນຢັນເຖິງພັນທະສັນຍາທີ່ພຣະອົງໄດ້ຊົງກະທຳໄວ້ແລ້ວ ເມື່ອພຣະອົງໄດ້ຊົງສ້າງສັພສິ່ງທັງປວງ (ປຖກ 1:31). ນັບຈາກນີ້ໄປ, ພັນທະສັນຍາດຽວກັນຈະມີຊັຍຊນະເໜືອທຸກສິ່ງທີ່ພຣະອົງໄດ້ຊົງສ້າງ. ມະນຸດຊາດຈະຍັງຄົງປົກຄອງຕໍ່ໄປໃນຖານະຜູ້ດູແລຮັກສາຂອງພຣະເຈົ້າເໜືອສິ່ງຊົງສ້າງຂອງພຣະອົງ. ໂນອາແລະບັນດາສະມາຊິກໃນຄອບຄົວຂອງລາວຈຳເປັນຕ້ອງສະຖາປະນາທຸກໆສິ່ງຂຶ້ນໃໝ່, ໂດຍປາສຈາກການຊ່ວຍເຫຼືອຈາກບັນດາຄົນອື່ນໆ. ສິ່ງຕ່າງໆເຊັ່ນ:

- **ສ້າງບ້ານເຮືອນຂອງພວກເຂົາເຈົ້າ:** ພວກເຂົາຕ້ອງການທີ່ຢູ່ອາສັຍທີ່ປ້ອງກັນຈາກສະພາບອາກາດແລະການປົກປ້ອງຈາກສັດປ່າ.
- **ຮັກສາຄວາມປອດພັຍອາຫານ.** ພຣະເຈົ້າໄດ້ຊົງອະນຸຍາດໃຫ້ພວກເຂົາເຈົ້າກິນສັດໄດ້ (ຂໍ້ 3). ພວກເຂົາເຈົ້າຈະເຮັດແນວນັ້ນ, ຫຼືເລືອກທີ່ຈະກິນພືດ? ອາຫານຂອງພວກເຂົາເຈົ້າມີຜົນກະທົບແນວໃດທີ່ພວກເພິ່ນເລືອກທີ່ຈະດຳເນີນຊີວິດ?
- **ການປ້ອງກັນຮັກສານ້ຳ.** ພວກເຂົາເຈົ້າຈຳເປັນຕ້ອງອາສັຍຢູ່ໃກ້ແມ່ນ້ຳ ຫຼືນ້ຳພຸ, ຫຼືຂຸດນ້ຳສ້າງ. ແຕ່ວິທີການໃດກໍຕາມ, ພວກເຂົາເຈົ້າບໍ່ສາມາດຢູ່ລອດໄດ້ຖ້າປາສຈາກແຫຼ່ງນ້ຳທີ່ດີ.

ແຕ່ພຣະເຈົ້າໄດ້ຊົງສະຖິດຢູ່ກັບພວກເພິ່ນແລະການຊົງສະຖິດຢູ່ຂອງພຣະອົງໄດ້ເຮັດໃຫ້ພວກເພິ່ນໄດ້ທຸກຢ່າງທີ່ຕ້ອງການໂດຍແທ້ຈິງ.

*ພຣະສັນຍາເຣື່ອງຮຸ້ງກິນນ້ຳຂອງພຣະເຈົ້າ ໃຫ້ກຳລັງໃຈແກ່ທ່ານໃນການດຳເນີນຊີວິດແບບຄຣິສະຕຽນຢ່າງໃດ?*

ພຣະເຈົ້າໄດ້ຊົງສັນຍາວ່າຈະຮັກສາການຊົງສ້າງຂອງພຣະອົງຈົນກວ່າພຣະເຢຊູຈະກັບມາອີກ. ຄວາມຈິງຕໍ່ໄປນີ້ຊີ້ໃຫ້ເຫັນລັກສນະຂອງຄຳສັນຍານັ້ນ:

1. **ພັນທະສັນຍາເດີມຂອງພຣະເຈົ້າກັບອາດາມຍັງຄົງມີຜົນຢູ່.** ພຣະເຈົ້າໄດ້ຊົງຕັ້ງພັນທະສັນຍາກັບອາດາມແລະໄດ້ຊົງຢືນຢັນພັນທະສັນຍານັ້ນກັບໂນອາ ຫຼັງນ້ຳຖ້ວມ. ພຣະອົງຍັງຊົງຄາດຫວັງໃຫ້ພວກເຮົາຮັກສາສິ່ງຊົງສ້າງຂອງພຣະອົງໃຫ້ດີ.
2. **ພຣະເຈົ້າຊົງວາງຄຸນຄ່າລາຄາຊີວິດຂອງມະນຸດສູງ.** ໃນຖານະທີ່ເປັນຜູ້ຖືພຣະສາຍາ(ຮູບຮ່າງ)ຂອງພຣະເຈົ້າ, ພວກເຮົາຕ້ອງຮ່ວມກັບພຣະອົງໃນການສງວນຮັກສາຊີວິດຂອງຄົນອື່ນ. <u>ຊີວິດແມ່ນຂອງຂວັນ</u>, ແລະຊີວິດຂອງມະນຸດກໍມີຄຸນຄ່າລາຄາແພງຫຼາຍ.
3. **ພັນທະສັນຍາຂອງພຣະເຈົ້າຂຍາຍໄປເຖິງການຊົງສ້າງທັງໝົດ.** ໃນຂນະທີ່ພວກເຮົາດູແລຮັກສາການຊົງສ້າງຂອງພຣະເຈົ້າ, ພວກເຮົາຕ້ອງຈື່ຈຳວ່າ ພຣະເຈົ້າໄດ້ຊົງຮວມເອົາສິ່ງທີ່ມີຊີວິດອື່ນໆເຂົ້າໃນພຣະພອນແຫ່ງພັນທະສັນຍາຂອງພຣະອົງ. <u>ພວກເຮົາຈຳເປັນຕ້ອງຈັດການສິ່ງຊົງສ້າງຂອງພຣະອົງຢ່າງສັດຊື່ໂດຍຄິດເຖິງຄວາມຈິງນັ້ນ</u>.

*ພຣະເຈົ້າຊົງເປີດເຜີຍຫຍັງກ່ຽວກັບພຣະອົງ ໂດຍຜ່ານທາງພັນທະສັນຍານີ້?*

## ນຳໃຊ້ໃນຊີວິດ

ພຣະເຈົ້າໄດ້ຊົງສັນຍາວ່າຈະຊົງປົກປັກຮັກສາການຊົງສ້າງຂອງພຣະອົງ. ຈົ່ງໃຊ້ນີ້ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງພິຈາລະນາຄວາມຮັບຜິດຊອບຂອງທ່ານຕໍ່ການຊົງສ້າງຂອງພຣະເຈົ້າ.** ພຣະເຈົ້າໄດ້ຊົງສັນຍາວ່າຈະຊົງຮັກສາການຊົງສ້າງຂອງພຣະອົງ. ຈົ່ງສ້າງລາຍຊື່ຈຳເພາະຂອງການກະທຳທີ່ທ່ານສາມາດປະຕິບັດໄດ້ ເພື່ອສະແດງໃຫ້ເຫັນຄວາມຮັບຜິດຊອບຂອງທ່ານ ໃນຖານະເປັນຜູ້ດູແລຮັກສາສິ່ງຊົງສ້າງຂອງພຣະອົງ.
- **ຈົ່ງຢືນຢັນຄຸນຄ່າລາຄາຂອງຊີວິດມະນຸດ.** ໂລກທຸກມື້ນີ້ມັກສະແດງທັສນະທີ່ຕ່ຳຕ້ອຍຕໍ່ຊີວິດຂອງມະນຸດ. ຈົ່ງເລືອກເອົາວິຖີທາງສະເພາະທີ່ທ່ານສາມາດເຮັດວຽກເພື່ອໃຫ້ຄຸນຄ່າລາຄາຊີວິດຂອງມະນຸດ.
- **ຈົ່ງມີສ່ວນຮ່ວມໃນພັນທະກິຈແຫ່ງຄວາມເມດຕາ.** ພຣະເຈົ້າໄດ້ຊົງສັນຍາວ່າຈະບໍ່ຊົງທຳລາຍໂລກດ້ວຍນ້ຳຖ້ວມອີກ, ແຕ່ວ່າພັຍທັມມະຊາດເຊັ່ນ: ລົມພາຍຸເຮີຣິເຄນ, ແຜ່ນດິນໄຫວ, ດິນແຫ້ງແລ້ງ, ແລະອື່ນໆຍັງເກີດຂຶ້ນ. ຈົ່ງພິຈາລະນາວິທີການທີ່ພຣະເຈົ້າອາດຈະຊົງນຳໃຊ້ທ່ານແລະຄົນອື່ນໆໃນຄຣິສຕະຈັກຂອງທ່ານໃຫ້ເປັນຜູ້ສົ່ງຂ່າວ(messengers)ຂອງຄວາມເມດຕາແລະການປອບໂຍນກັບບັນດາຜູ້ທີ່ຕ້ອງການ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**